ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------------

ກະຊວງສຶກສາທິການ ແລະ ກິລາ

1068

ເລກທີ______________/ສສກ.ກນ.15

ນະຄອນຫຼວງວຽງຈັນ, ວັນທີ 25 SEP 2015

## <u>ແຈ້ງການ ແນະນຳ</u>

ເຖິງ : - ທ່ານ ຫົວໜ້າພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງ,

- ນັກຮຽນ-ນັກສຶກສາ ແລະ ຜູ້ປົກຄອງ

<u>ເລື່ອງ</u> : ການປະກອບເອກະສານຂອງນັກຮຽນ-ນັກສຶກສາ ເພື່ອ ສະເໜີຂໍອະນຸມັດ ໄປຮຽນຕໍ່ ຢູ່ຕ່າງປະເທດ <u>ດ້ວຍທຶນສ່ວນຕົວ</u> (ເລີ່ມແຕ່ສົກຮຽນ 2015-2016 ເປັນຕົ້ນໄປ)

ອີງຕາມ: - ກົດໝາຍວ່າດ້ວຍການສຶກສາ(ສະບັບປັບປຸງ) ສະບັບເລກທີ 62/ສພຊ ລົງວັນທີ 16 ກໍລະກົດ 2015,

- ຄຳສັ່ງແນະນຳຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດສົ່ງພະນັກງານ ແລະ ນັກຮຽນ ໄປຍົກລະດັບຕ່າງໆຢູ່ ສສ ຫວຽດນາມ ດ້ວຍແຫຼ່ງທຶນຕ່າງໆ ສະບັບເລກທີ 08/ນຍ ລົງວັນທີ 20 ກຸມພາ 2014,
- ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍລະບຽບການຄຸ້ມຄອງນັກຮຽນ, ນັກສຶກສາລາວໄປສຶກສາຢູ່ຕ່າງປະເທດ ສະບັບເລກທີ 3552/ສສກ.ກນ.13 ລົງວັນທີ 28 ສິງຫາ 2013.

ກະຊວງສຶກສາທິການແລະກິລາ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ : ພັກ-ລັດຖະບານ ກໍຄື ກະຊວງສຶກສາທິການແລະກິລາ ມີນະໂຍບາຍຊຸກຍູ້-ສົ່ງເສີມ ໃຫ້ນັກຮຽນ-ນັກສຶກສາ ຜູ້ທີ່ມີເງື່ອນໄຂ ແລະ ມີຄວາມພ້ອມ ເຊັ່ນດ້ານ: ຄວາມຮູ້, ຄຸນສົມບັດ, ສຸຂະພາບ, ເສດຖະກິດ ແລະ ອື່ນໆ ໄດ້ໄປສຶກສາຮ່ຳຮຽນ ວິຊາສະເພາະຂະແໜງການຕ່າງໆ ຢູ່ຕ່າງປະເທດ *ດ້ວຍທຶນສ່ວນຕົວຂອງຕົນເອງຫລືຄອບຄົວ* ແລ້ວ ກັບຄືນມາສ້າງສາພັດທະນາປະເທດຊາດ ຕາມແນວທາງນະໂຍບາຍ ຂອງ ພັກ ແລະ ລັດຖະບານ.

ການປະຕິບັດຕົວຈິງວຽກງານດັ່ງກ່າວໃນໄລຍະຜ່ານມາເຫັນວ່າ ຍັງມີຫລາຍບັນຫາ ທີ່ຈຳເປັນຕ້ອງໄດ້ ປັບປຸງແກ້ໄຂເຊັ່ນ: ການປະກອບເອກະສານເພື່ອຂໍອະນຸມັດ, ການຕອບຮັບ ຂອງ ມະຫາວິທະຍາໄລ ຢູ່ຕ່າງປະເທດ, ການຈັດສົ່ງແລະອື່ນໆ. ໃນນັ້ນ, ການປະກອບເອກະສານເພື່ອ ຂໍອະນຸມັດເປັນບັນຫານຶ່ງ ທີ່ມີຊ່ອງຫວ່າງໃຫ້ກຸ່ມຄົນບໍ່ດີສວຍໂອກາດ *"ເປັນນາຍໜ້າ"* ວິ້ງເຕັ້ນ, ທວງເອົາຄ່າຕອບແທນຫລືປອມແປງເອກະສານທາງການດ້ວຍຫລາຍຮູບແບບ.

ສະນັ້ນ, ເພື່ອສະກັດກັ້ນບັນຫາດັ່ງກ່າວ, ກະຊວງສຶກສາທິການແລະກິລາ ຈຶ່ງອອກແຈ້ງການແນະນຳ ມາຍັງການຈັດຕັ້ງ ທຸກພາກສ່ວນ, ພະນັກງານ, ທະຫານ, ຕຳຫລວດ ແລະ ປະຊາຊົນ ຊາບ ແລະ ປະຕິບັດ ດັ່ງນີ້:

1. ນັກຮຽນ-ນັກສຶກສາ ຜູ້ທີ່ມີຄວາມພ້ອມແລະມີຄວາມສະໝັກໃຈຢາກໄປສຶກສາຮ່ຳຮຽນດ້ວຍທຶນສ່ວນຕົວ ຢູ່ຕ່າງປະເທດ ໃຫ້ປະກອບເອກະສານຕ່າງໆ ຕາມລະບຽບການ ແລ້ວ <u>*ມາຍື່ນ-ສົ່ງດ້ວຍຕົນເອງ*</u> ຢູ່ກະຊວງສຶກສາທິການ ແລະ ກິລາ (ກົມກິດຈະການນັກສຶກສາ, ຕັ້ງຢູ່ ເຂດສະໜາມກິລາເຈົ້າອານຸວົງ, ມ. ຈັນທະບູລີ, ນະຄອນຫລວງວຽງຈັນ).
2. ເອກະທີ່ຕ້ອງປະກອບຍື່ນ ເພື່ອຂໍອະນຸມັດອອກຂໍ້ຕົກລົງ ໄປສຶກສາຢູ່ຕ່າງປະເທດ ດ້ວຍທຶນສ່ວນຕົວ ມີດັ່ງນີ້:

(1) ໃບຄຳຮ້ອງຂຽນດ້ວຍຕົນເອງ ຫລື ຂຽນຕາມແບບ ທີ່ແຈ້ງຕາມເວບໄຊ ຂອງ ກົມກິດຈະການນັກສຶກສາ;

(2) ຊີວະປະຫວັດພາສາລາວ ( ຕາມແບບ ທີ່ມີຢູ່ ໃນເວບໄຊຂອງກົມກິດຈະການນັກສຶກສາ);

(3) ໃບຮັບປະກັນ (ຕາມແບບ ທີ່ມີຢູ່ໃນເວບໄຊຂອງກົມກິດຈະການນັກສຶກສາ);

(4) ໃບສັນຍາຜູກພັນການກັບຄືນປະເທດ (ຕາມແບບ ທີ່ ມີຢູ່ໃນເວບໄຊຂອງກົມກິດຈະການນັກສຶກສາ);

(5) ໜັງສືຕອບຮັບຕົນເອງຂອງສະຖາບັນການສຶກສາ/ມະຫາວິທະຍາໄລ ທີ່ຈະໄປສຶກສາຢູ່ຕ່າງປະເທດ(ຕ້ອງມີ);

(6) ໃບຢັ້ງຢືນທີ່ຢູ່ ແລະ ສຳເນົາ ປຶ້ມສຳມະໂນຄົວ;

(7) ສຳເນົາ ໃບປະກາສະນີຍະບັດ(ລະດັບສູງສຸດຂອງຕົນເອງໄດ້ຮັບ) ແລະ ສຳເນົາໃບຄະແນນ;

(8) ໃບຢັ້ງຢືນສຸຂະພາບ(ຈາກໂຮງໝໍໃດນຶ່ງ ບໍ່ເກີນ 03 ເດືອນ);

(9) ສຳເນົາໜັງສືເດີນທາງ(Passport , ກໍລະນີທີ່ມີແລ້ວ);

(10) ສຳລັບພະນັກງານ ຫລື ພະສົງ ຕ້ອງມີໜັງສືນຳສົ່ງ ຫລື ຂໍຕົກລົງຂອງ ອົງການຈັດຕັ້ງທີ່ກ່ຽວຂ້ອງ.

➢ ສະເພາະເອກະສານ ແຕ່ລຳດັບທີ່ (1) ເຖິງ (4) ແມ່ນສາມາດ ພິມຮັບເອົາໄດ້(download) ຕາມເວບໄຊຂອງກົມກິດຈະການນັກສຶກສາ ຄື: www.dsa.moe.gov.la ຫລື ສາມາດຕິດຕໍ່ພົວພັນ ສອບຖາມຂໍ້ມູນເພີ່ມໄດ້ ຜ່ານທາງ ໂທລະສັບ ຄື : (021)255033, (021)255034 ແລະ (021)265094 ໃນວັນເວລາລັດຖະການ.

➢ ເອກະສານທັງໝົດຂ້າງເທິງນັ້ນ ໃຫ້ປະກອບເປັນ 03 ຊຸດ(ສະບັບຕົ້ນ 1+ ສະບັບສຳເນົາ 2) ແລ້ວ ນຳໄປສົ່ງຍື່ນ *ຈົດທະບຽນຂາເຂົ້າ* ຢູ່ກົມກິດຈະການນັກສຶກສາ *ດ້ວຍຕົນເອງ ຫຼື ໃຫ້ເປັນຜູ້ເປັນພໍ່/ແມ່*ໄປສົ່ງໃຫ້. ພະນັກງານຢູ່ກົມກິດຈະການນັກສຶກສາ ຈະບໍ່ຮັບເອກະສານ ໃນກໍລະນີໃຫ້ຄົນ ອື່ນນຳໄປສົ່ງໃຫ້.

➢ ຄ່າໃຊ້ຈ່າຍ ໃນການປະກອບເອກະສານ ແລະ ການຄຸ້ມຄອງ-ຕິດຕາມ 35.000 ກີບ (ສາມສິບຫ້າພັນກີບ), ຈ່າຍຄັ້ງດຽວໃນເວລາມາຍື່ນ ຈົດທະບຽນເອກະສານຢູ່ ກົມກິດຈະການນັກສຶກສາ, ກະຊວງສຶກສາທິການ ແລະ ກິລາ.

➢ ສະເພາະໜັງສືຕອບຮັບທີ່ອອກຊື່ຕົນເອງ ຂອງ ສະຖາບັນການສຶກສາ/ມະຫາວິທະຍາໄລ ທີ່ຈະໄປສຶກສາຢູ່ຕ່າງປະເທດ ນັ້ນ ແມ່ນມອບໃຫ້ຜູ້ທີ່ຈະໄປຮຽນ ຫລື ພໍ່ແມ່-ຜູ້ປົກຄອງ ເປັນຜູ້ຕິດຕໍ່ພົວພັນເອົາເອງ ຫລື ກໍລະນີຈຳເປັນກໍ່ສາມາດ ສະເໜີໃຫ້ ກົມກິດຈະການນັກສຶກສາ ຊ່ວຍພົວພັນປະສານງານໃຫ້ເປັນທາງການກໍ່ໄດ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອຊາບ ແລະ ໃຫ້ການຮ່ວມມືດ້ວຍ.

ລັດຖະມົນຕີຊ່ວຍວ່າການ ກະຊວງສຶກສາທິການ ແລະ ກິລາ,
(ຜູ້ຊີ້ນຳ ວຽກງານກິດຈະການນັກສຶກສາ)

ຮສ.ດຣ.ກອງສີ ແສງມະນີ